Australian Government
Attorney-General's Department

ພຶດສະພາ 2020

# ການໄປທຸຣະຢູ່ສານ

ໃນລະຫວ່າງທີ່ມີການແຜ່ລະບາດຂອງໂຄວິດ-19 (COVID-19) ຫ້ອງການຂອງ ສານສູງແຫ່ງປະເທດອອສເຕຣເລັຍ (High Court of Australia), ສານແຫ່ງລັດຖະບານກາງຂອງອອສເຕຣເລັຍ (Federal Court of Australia), ສານຄອບຄົວແຫ່ງປະເທດອອສເຕຣເລັຍ (Family Court of Australia) ແລະ ສານຊັ້ນຕົ້ນແຫ່ງປະເທດອອສເຕຣເລັຍ (Federal Circuit Court of Australia) ກໍຍັງດໍາເນີນວຽກງານຢູ່.

ເຖິງວ່າຫ້ອງການຂອງສານເຫຼົ່ານັ້ນໄດ້ປິດພະແນກຕ້ອນຮັບສາທາຣະນະຊົນແລະການບໍລິການແບບ ໜ້າ-ຕໍ່-ໜ້າ ກໍຕາມ, ແຕ່ສານທຸກແຫ່ງກໍໄດ້ຈັດໃຫ້ມີການວ່າຄວາມພາຍໃຕ້ອໍານາດສານ. ໃນກໍຣະນີສຸກເສີນ, ທາງສານກໍອາດຈະຈັດໃຫ້ມີການບໍຣິການແບບ ໜ້າ-ຕໍ່-ໜ້າ ໃຫ້ໄດ້ຫຼັງຈາກທີ່ໄດ້ທໍາການປະເມີນຂັ້ນຕົ້ນທາງໂທຣະສັບແລ້ວ.

ຖ້າທ່ານຕ້ອງການຂໍ້ມູນແລະການອັບເດດລ່າສຸດ, ຂໍໃຫ້ເຂົ້າໄປເບິ່ງເວັບໄຊ້ຂອງແຕ່ລະສານ ຫຼື ພົວພັນໄປຫາສານຕາມລາຍລະອຽດຂ້າງລຸ່ມນີ້:

- High Court of Australia ຫຼື 02 6270 6811
- Federal Court of Australia ຫຼື 1300 720 980
- Family Court of Australia ຫຼື 1300 352 000
- Federal Circuit Court of Australia ຫຼື 1300 720 980

ສານອຸທອນດ້ານການປົກຄອງ ກໍຍັງດໍາເນີນວຽກງານຢູ່ເຊັ່ນກັນ, ເຖິງແມ່ນວ່າຫ້ອງການທະບຽນທ້ອງຖິ່ນຂອງສານອຸທອນນີ້ ຈະໄດ້ປິດຢູ່ໃນປັດຈຸບັນ. ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ຂໍໃຫ້ເຂົ້າໄປເບິ່ງ website ຂອງສານອຸທອນນີ້ ຫຼື ໂທເລກ 1800 228 333.